ທະນາຄານກຸງເທບ ຈຳກັດ (ມະຫາຊົນ)
- ສາຂາປາກເຊ

ເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020

**Deloitte.**

ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ
ອາຄານຕະຫຼາດຫຼັກຊັບລາວ
ບ້ານໂພນທັນ, ຖະໜົນ T4
ເມືອງໄຊເສດຖາ
ຕູ້ໄປສະນີ 2017, ນະຄອນຫຼວງວຽງຈັນ
ສປປ ລາວ

ໂທ : +856 21 419 300
ແຟັກ : +856 21 419 305

Deloitte (Lao) Sole Company Limited
Lao Securities Exchange Building
Phonthan Village, T4 Road
Saysettha District
P.O. Box 2017, Vientiane Capital
Lao PDR

Tel : +856 21 419 300
Fax : +856 21 419 305
www.deloitte.com

# ບົດລາຍງານການກວດສອບຂອງນັກກວດສອບບັນຊີຕາມກົດໝາຍ

ເຖິງ: ຜູ້ຈັດການສາຂາ ທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

## ຄຳເຫັນ

ຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນ ຂອງທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ ("ສາຂາ") ເຊິ່ງລວມມີໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2020, ໃບສະຫຼຸບຜົນໄດ້ຮັບ ແລະ ຜົນໄດ້ຮັບສຸດທິອື່ນ, ໃບລາຍງານການປ່ຽນແປງທາງບັນຊີຂອງສຳນັກງານໃຫຍ່ ແລະ ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດການບັນຊີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ຊຶ່ງປະກອບດ້ວຍສັງລວມວິທີການບັນຊີທີ່ສຳຄັນ.

ຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນຂອງສາຂາ ສຳລັບປີສິ້ນສຸດວັນທີ 31 ທັນວາ 2020 ໄດ້ຖືກກະກຽມໃນສາລະສຳຄັນ ໂດຍສອດຄ່ອງກັບລະບຽບການ, ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີຂອງສາຂາ ເຊິ່ງໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

## ພື້ນຖານໃນການອອກຄຳເຫັນ

ຂ້າພະເຈົ້າໄດ້ປະຕິບັດການກວດສອບຕາມມາດຕະຖານສາກົນດ້ານການກວດສອບບັນຊີ ("ISAs"). ຄວາມຮັບຜິດຊອບຂອງຂ້າພະເຈົ້າພາຍໃຕ້ມາດຕະຖານດັ່ງກ່າວແມ່ນໄດ້ອະທິບາຍເພີ່ມເຕີມໃນວັກທີ່ມີຫົວຂໍ້ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ການກວດສອບເອກະສານລາຍງານການເງິນຂອງບົດລາຍງານນີ້. ຂ້າພະເຈົ້າມີຄວາມເປັນອິດສະລະຈາກສາຂາໂດຍສອດຄ່ອງຕາມມາດຕະຖານສາກົນດ້ານຈັນຍາບັນສຳລັບນັກວິຊາການບັນຊີ ທີ່ອອກໂດຍຄະນະກຳມະການ ("IESBA Code") ພ້ອມກັນນັ້ນກໍ່ໄດ້ປະຕິບັດຕາມຄວາມຮຽກຮ້ອງຕ້ອງການດ້ານຈັນຍາບັນທີ່ພົວພັນກັບການກວດສອບເອກະສານລາຍງານການເງິນຂອງພວກເຮົາ ແລະ ຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ຕາມກົດຈັນຍາບັນເຫຼົ່ານີ້. ຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບບັນຊີທີ່ຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃນການອອກຄຳເຫັນຂອງຂ້າພະເຈົ້າ.

## ຂໍ້ມູນ ແລະ ເຫດການທີ່ເນັ້ນໜັກ - ຫຼັກການບັນຊີ ແລະ ຂໍ້ຈຳກັດໃນການນຳໃຊ້

ຂ້າພະເຈົ້າຂໍໃຫ້ທ່ານເບິ່ງບົດອະທິບາຍເລກທີ 2 ແລະ 3 ຂອງເອກະສານລາຍງານການເງິນ ເຊິ່ງໄດ້ອະທິບາຍພື້ນຖານການບັນຊີ ແລະນະໂຍບາຍການບັນຊີທີ່ສຳຄັນ. ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນ ເພື່ອສະໜອງຂໍ້ມູນສຳລັບໃຊ້ ໂດຍສາຂາທະນາຄານ, ສຳນັກງານໃຫຍ່ ແລະ ທະນາຄານ ແຫ່ງ ສປປ ລາວ. ສະນັ້ນ, ເອກະສານລາຍງານການເງິນ ອາດບໍ່ເໝາະສົມຫາກມີການນຳໃຊ້ເພື່ອຈຸດປະສົງອື່ນ. ຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແບບທີ່ປ່ຽນແປງໄປໃນເລື່ອງນີ້.

MAKING AN IMPACT THAT MATTERS since 1845

Deloitte refers to one or more of Deloitte Touche Tohmatsu Limited ("DTTL"), its global network of member firms, and their related entities (collectively, the "Deloitte organization"). DTTL (also referred to as "Deloitte Global") and each of its member firms and related entities are legally separate and independent entities, which cannot obligate or bind each other in respect of third parties. DTTL and each DTTL member firm and related entity is liable only for its own acts and omissions, and not those of each other. DTTL does not provide services to clients. Please see www.deloitte.com/about to learn more.

## ຄວາມຮັບຜິດຊອບຂອງຜູ້ບໍລິຫານ ໃນການກະກຽມເອກະສານລາຍງານການເງິນ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນໍາສະເໜີເອກະສານລາຍງານການເງິນໂດຍເໝາະສົມ, ສອດຄ່ອງກັບລະບຽບການ, ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີຂອງສາຂາ ເຊິ່ງໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ແລະ ຮັບຜິດຊອບກ່ຽວກັບການຄວບຄຸມພາຍໃນທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນເພື່ອໃຫ້ສາມາດກະກຽມບົດລາຍງານການເງິນທີ່ປາສະຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການປະເມີນຄວາມສາມາດຂອງສາຂາໃນການສືບຕໍ່ດຳເນີນງານແບບຕໍ່ເນື່ອງ, ຮັບຜິດຊອບເປີດເຜີຍຂໍ້ມູນທີ່ກ່ຽວກັບຄວາມສາມາດໃນການສືບຕໍ່ດຳເນີນງານແບບຕໍ່ເນື່ອງ (ຕາມຄວາມເໝາະສົມ) ແລະ ຮັບຜິດຊອບໃນການນຳໃຊ້ຫຼັກການບັນຊີແຫ່ງຄວາມຕໍ່ເນື່ອງ ຍົກເວັ້ນຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະຍຸບເລີກສາຂາ ຫຼື ຢຸດການດຳເນີນກິດຈະການ ຫຼື ບໍ່ສາມາດດຳເນີນກິດຈະການແບບຕໍ່ເນື່ອງຕໍ່ໄປໄດ້.

## ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ການກວດສອບເອກະສານລາຍງານການເງິນ

ການກວດສອບຂອງຂ້າພະເຈົ້າມີຈຸດປະສົງເພື່ອໃຫ້ໄດ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານທາງການເງິນປາສະຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ ແລະເພື່ອອອກບົດລາຍງານການກວດສອບທີ່ມີຄຳເຫັນຂອງຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າການປະຕິບັດການກວດສອບຕາມມາດຕະຖານສາກົນດ້ານການກວດສອບບັນຊີ ("ISAs") ຈະສາມາດກວດພົບຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນທີ່ມີຢູ່ໄດ້ສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນເມື່ອຄາດຄະເນໄດ້ຢ່າງສົມເຫດສົມຜົນວ່າລາຍການທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມເຂົ້າກັນຈະມີຜົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ໃຊ້ເອກະສານລາຍງານການເງິນ ຈາກການນຳໃຊ້ບົດລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງຂ້າພະເຈົ້າຕາມມາດຕະຖານສາກົນດ້ານການກວດສອບບັນຊີ ("ISAs") ຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ການສັງເກດ, ການຕັ້ງຂໍ້ສົງໄສຕະຫຼອດການກວດສອບ. ການປະຕິບັດງານຂອງຂ້າພະເຈົ້າຍັງລວມເຖິງ:

- ກຳນົດ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງໃນເອກະສານລາຍງານການເງິນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ, ອອກແບບ ແລະ ວາງແຜນການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະເກັບຫຼັກຖານການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນບ່ອນອີງໃນການສະແດງຄຳເຫັນຂອງຂ້າພະເຈົ້າ. ຄວາມສ່ຽງທີ່ບໍ່ພົບຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນຊຶ່ງເປັນຜົນມາຈາກການທຸຈະລິດຈະສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ ເນື່ອງຈາກການທຸຈະລິດອາດກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ການຕັ້ງໃຈປິດບັງຂໍ້ມູນ, ການສະແດງຂໍ້ມູນທີ່ບໍ່ກົງກັບຄວາມເປັນຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈໃນລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບວິທີການກວດສອບທີ່ເໝາະສົມກັບສະຖານະການ ແຕ່ບໍ່ແມ່ນເພື່ອຈຸດປະສົງສະແດງຄຳຄິດເຫັນຕໍ່ຄວາມມີປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ຜູ້ບໍລິຫານໃຊ້ ແລະຄວາມສົມເຫດສົມຜົນຂອງການປະເມີນການທາງບັນຊີ ແລະ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງເຊິ່ງກຳນົດຂຶ້ນໂດຍຜູ້ບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ຫຼັກການບັນຊີແຫ່ງຄວາມຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບບັນຊີທີ່ໄດ້ຮັບ ວ່າມີຄວາມບໍ່ແນ່ນອນສຳຫຼັບການດຳເນີນງານແບບຕໍ່ເນື່ອງທີ່ເປັນສາລະສຳຄັນບໍ່ຕໍ່ກັບ ເຫດການ ຫຼື ສະຖານະການທີ່ອາດກໍ່ໃຫ້ເກີດຄວາມສົງໄສທີ່ມີຄວາມສຳຄັນຕໍ່ຄວາມສາມາດໃນການດຳເນີນກິດຈະການແບບຕໍ່ເນື່ອງຂອງສາຂາ. ຖ້າຂ້າພະເຈົ້າໄດ້ສະຫຼຸບວ່າມີຄວາມບໍ່ແນ່ນອນສຳຫຼັບການດຳເນີນງານແບບຕໍ່ເນື່ອງທີ່ເປັນສາລະສຳຄັນ, ຂ້າພະເຈົ້າຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີຂອງຂ້າພະເຈົ້າໃນການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ, ຄຳເຫັນຂອງຂ້າພະເຈົ້າອາດມີການປ່ຽນແປງໄປ. ຂໍ້ສະຫຼຸບຂອງຂ້າພະເຈົ້າຂຶ້ນຢູ່ກັບຫຼັກຖານການກວດສອບບັນຊີທີ່ໄດ້ຮັບ ຮອດວັນທີອອກບົດລາຍງານການກວດສອບບັນຊີຂອງຂ້າພະເຈົ້າ. ເຖິງຢ່າງໃດກໍ່ຕາມ, ເຫດການ ຫຼື ສະຖານະການທີ່ອາດເກີດຂຶ້ນໃນອະນາຄົດອາດເປັນສາເຫດໃຫ້ສາຂາຕ້ອງຢຸດຕິການດຳເນີນກິດຈະການແບບຕໍ່ເນື່ອງ.

- ປະເມີນການນຳສະເໜີ ໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນໂດຍລວມ, ລວມເຖິງການເປີດເຜີຍຂໍ້ມູນກ່ຽວກັບ ລາຍການ ແລະ ເຫດການໃນເອກະສານລາຍງານການເງິນຢ່າງຖືກຕ້ອງຕາມຄວາມເໝາະສົມ.

ຂ້າພະເຈົ້າໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບແຜນປະຕິບັດງານ, ໜ້າວຽກ, ເວລາທີ່ຈະໃຊ້ໃນການກວດສອບ ແລະ ປະເດັນທີ່ມີຄວາມສຳຄັນທີ່ພົບຈາກການກວດສອບ ລວມເຖິງຂໍ້ບົກພ່ອງທີ່ມີຄວາມສຳຄັນຕໍ່ລະບົບການຄວບຄຸມພາຍໃນຊຶ່ງຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງຂ້າພະເຈົ້າ.

ນະຄອນຫຼວງວຽງຈັນ,
ວັນທີ 30 ມີນາ 2021

ທ່ານ ຊະວາລາ ທຽນປະເສີດທິລວງ
ນັກກວດສອບບັນຊີຕາມກົດໝາຍ
**ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ**

**ທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ**

## ຂໍ້ມູນທົ່ວໄປຂອງສາຂາ

| | |
|---|---|
| ສາຂາ | ທະນາຄານກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ |
| ໃບອະນຸຍາດເລກທີ | 40/ທຫລ |
| ທີ່ຕັ້ງຫ້ອງການ | ຖະໜົນ ສາລາຂຽວດົງຈອງ,<br>ເຮືອນເລກທີ 3 ບ້ານ ໂພນສະຫວັນ, ເມືອງ ປາກເຊ,<br>ແຂວງ ຈຳປາສັກ, ສປປ ລາວ |
| ຜູ້ຈັດການສາຂາ | ທ່ານ ນາງ ສະດາພອນ ອຸຣະຊັດ |
| ຜູ້ກວດສອບບັນຊີ | ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ |

## ໜ້າທີ່ຮັບຜິດຊອບຂອງຜູ້ຈັດການຕໍ່ກັບເອກະສານລາຍງານການເງິນ

ຜູ້ຈັດການສາຂາມີໜ້າທີ່ຮັບຜິດຊອບເພື່ອໃຫ້ໝັ້ນໃຈວ່າເອກະສານລາຍງານການເງິນດັ່ງກ່າວມີການກະກຽມ ແລະ ສະແດງຖານະການເງິນຂອງສາຂາ ໃນວັນທີ 31 ທັນວາ 2020, ໃບສະຫຼຸບຜົນໄດ້ຮັບ ແລະຜົນໄດ້ຮັບສຸດທິອື່ນ, ໃບລາຍງານການປ່ຽນແປງທາງບັນຊີຂອງສຳນັກງານໃຫຍ່ ແລະ ໃບລາຍງານກະແສເງິນສົດສຳລັບປີສິ້ນສຸດການບັນຊີ ດັ່ງກ່າວ ຢ່າງຖືກຕ້ອງ. ສະນັ້ນ, ໃນການກະກຽມເອກະສານລາຍງານການເງິນນີ້, ທາງຜູ້ຈັດການສາຂາຕ້ອງໄດ້ປະຕິບັດ ດັ່ງລຸ່ມນີ້:

i) ນຳໃຊ້ຫຼັກການບັນຊີທີ່ເໝາະສົມໂດຍມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ ແລະ ນຳໃຊ້ຢ່າງຕໍ່ເນື່ອງ;

ii) ປະຕິບັດໃຫ້ສອດຄ່ອງຕາມລະບຽບການ, ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີຂອງສາຂາ ເຊິ່ງໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ແລະ ໃຫ້ແນ່ໃຈວ່າສິ່ງເຫຼົ່ານີ້ ໄດ້ຮັບການເປີດເຜີຍຢ່າງເໝາະສົມ, ມີຄຳອະທິບາຍ ແລະ ສະແດງອອກໃນເອກະສານລາຍງານການເງິນ;

iii) ເກັບຮັກສາຫຼັກຖານທີ່ໃຊ້ໃນການບັນທຶກບັນຊີຢ່າງພຽງພໍ ແລະ ມີລະບົບການຄວບຄຸມພາຍໃນທີ່ມີປະສິດທິພາບ;

iv) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຫຼັກການຄວາມສືບເນື່ອງ, ເວັ້ນແຕ່ວ່າບໍ່ເໝາະສົມທີ່ຈະຄາດວ່າສາຂາຈະດຳເນີນການຕໍ່ໄປໃນອະນາຄົດອັນໃກ້; ແລະ

v) ຄວບຄຸມ ແລະ ຊີ້ແນວທາງໃຫ້ສາຂາໃນການຕັດສິນໃຈທີ່ສຳຄັນ ທີ່ສົ່ງຜົນກະທົບ ຕໍ່ການດຳເນີນງານ ແລະ ຜົນງານຢ່າງມີປະສິດທິພາບ ແລະ ໃຫ້ແນ່ໃຈວ່າການຕັດສິນໃຈດັ່ງກ່າວສົ່ງຜົນກະທົບທີ່ເໝາະສົມໃນເອກະສານລາຍງານການເງິນ.

ຜູ້ຈັດການສາຂາໄດ້ຢັ້ງຢືນວ່າ ທາງສາຂາໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງນີ້ເຂົ້າໃນການກະກຽມເອກະສານລາຍງານການເງິນ.

ທ່ານ ນາງ ສະດາພອນ ອຸຣະຊັດ

ຜູ້ຈັດການສາຂາ

30 ມີນາ 2021

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານຖານະການເງິນ

ໃນວັນທີ 31 ທັນວາ 2020

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | 2020 | 2019 |
|---|---|---|---|
| **ຊັບສິນ** | | | |
| ເງິນສົດໃນກຳມື | 11.1 | 1,733,199,345 | 4,301,854,875 |
| ບັນຊີລະຫວ່າງທະນາຄານ ແລະ ລາຍການໃນຕະຫຼາດເງິນ | 12 | 69,911,213,029 | 37,866,475,331 |
| ລູກໜີ້ສາຂາອື່ນ | 23 | 52,225,038,911 | 31,119,916,585 |
| ເງິນຝາກຕາມລະບຽບການ | 13 | 2,302,910,074 | 410,512,239 |
| ເງິນລົງທຶນ | 14 | - | 20,000,000,000 |
| ເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ດອກເບ້ຍຄ້າງຮັບ, ສຸດທິ | 15 | | |
| ເງິນໃຫ້ກູ້ຢືມແກ່ລູກຄ້າ | | 5,737,545,000 | 15,895,444,521 |
| ດອກເບ້ຍຄ້າງຮັບ | | 5,095,888 | 83,011,502 |
| ເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ດອກເບ້ຍຄ້າງຮັບ | | 5,742,640,888 | 15,978,456,023 |
| ຫັກ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ | | (68,850,540) | (190,745,333) |
| ລວມເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ດອກເບ້ຍຄ້າງຮັບ, ສຸດທິ | | 5,673,790,348 | 15,787,710,690 |
| ອາຄານ ແລະ ອຸປະກອນ | 16 | 4,888,091,233 | 2,189,795,596 |
| ຊັບສິນບໍ່ມີຕົວຕົນ | 17 | 126,516,749 | 1 |
| ຊັບສິນອາກອນລາຍໄດ້ເຍື່ອນຊຳລະ | 18 | - | 45,778,880 |
| ຊັບສິນອາກອນໃນປີ | 10 | 66,335,409 | - |
| ຊັບສິນອື່ນໆ | 19 | 19,332,270 | 4,009,737,754 |
| **ລວມຍອດຊັບສິນ** | | 136,946,427,368 | 115,731,781,951 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານຖານະການເງິນ (ຕໍ່)

ໃນວັນທີ 31 ທັນວາ 2020

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | 2020 | 2019 |
|---|---|---|---|
| **ໜີ້ສິນ ແລະ ບັນຊີຂອງສຳນັກງານໃຫຍ່** | | | |
| ເງິນຝາກຈາກລູກຄ້າ | 20 | 29,461,053,554 | 9,351,029,522 |
| ເຈົ້າໜີ້ສາຂາອື່ນ | 23 | 5,688,740,000 | 7,472,500,000 |
| ໜີ້ສິນອື່ນໆ | 21 | 458,822,562 | 236,807,788 |
| **ລວມໜີ້ສິນ** | | 35,608,616,116 | 17,060,337,310 |
| **ບັນຊີຂອງສຳນັກງານໃຫຍ່** | | | |
| ທຶນຂອງສາຂາ | 22 | 101,650,000,000 | 101,650,000,000 |
| ຂາດທຶນສະສົມ | | | |
| ທຶນທີ່ຍັງບໍ່ໄດ້ຈັດສັນ | | (312,188,748) | (2,978,555,359) |
| **ລວມບັນຊີຂອງສຳນັກງານໃຫຍ່** | | 101,337,811,252 | 98,671,444,641 |
| **ລວມໜີ້ສິນ ແລະ ບັນຊີຂອງສຳນັກງານໃຫຍ່** | | 136,946,427,368 | 115,731,781,951 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບສະຫຼຸບຜົນໄດ້ຮັບ ແລະ ຜົນໄດ້ຮັບສຸດທິອື່ນ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2020

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | 2020 | 2019 |
|---|---|---|---|
| ລາຍຮັບດອກເບ້ຍ | 5 | 3,384,232,306 | 3,467,790,063 |
| ລາຍຈ່າຍດອກເບ້ຍ | 5 | (469,750,344) | (323,921,384) |
| ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 5 | 2,914,481,962 | 3,143,868,679 |
| ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ | 6 | 600,044,649 | 258,350,156 |
| ລາຍຈ່າຍຄ່າທຳນຽມ ແລະ ການບໍລິການ | 6 | (40,116,666) | (39,692,000) |
| ລາຍຮັບຄ່າທຳນຽມ ແລະ ການບໍລິການ ສຸດທິ | 6 | 559,927,983 | 218,658,156 |
| ກຳໄລຈາກອັດຕາແລກປ່ຽນ | | 2,271,267,703 | 2,138,131,564 |
| ລາຍຮັບດຳເນີນງານອື່ນ | | 27,838 | 43,573 |
| ລວມລາຍຮັບດຳເນີນງານ | | 5,745,705,486 | 5,500,701,972 |
| ລາຍຈ່າຍອື່ນໃນການດຳເນີນງານ | | | |
| ລາຍຈ່າຍກ່ຽວກັບພະນັກງານ | 7 | (864,701,210) | (2,038,642,252) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມ | 8 | (1,287,980,397) | (585,832,723) |
| ອື່ນໆ | | (674,073,667) | (1,224,711,576) |
| ລວມລາຍຈ່າຍດຳເນີນງານ | | (2,826,755,274) | (3,849,186,551) |
| (ລາຍຈ່າຍ)/ ເກັບຄືນເງິນແຮສຳລັບໜີ້ຕ້ອງຮັບທວງຍາກ | 9 | 128,148,632 | (2,249,475) |
| ກຳໄລກ່ອນອາກອນກຳໄລ | | 3,047,098,844 | 1,649,265,946 |
| (ລາຍຈ່າຍ) ລາຍຮັບອາກອນກຳໄລ | 10 | (380,732,233) | 4,831,381 |
| ກຳໄລສຸດທິ | | 2,666,366,611 | 1,654,097,327 |
| ລວມຜົນກຳໄລອື່ນ ສຸດທິ | | 2,666,366,611 | 1,654,097,327 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານການປ່ຽນແປງທາງບັນຊີຂອງສຳນັກງານໃຫຍ່

ສຳລັບປີສິ້ນສຸດວັນທີ 31 ທັນວາ 2020

ຫົວໜ່ວຍ : ກີບ

| | ທຶນສາຂາ | ຂາດທຶນສະສົມ ທຶນທີ່ຍັງບໍ່ໄດ້ຈັດສັນ | ລວມບັນຊີຂອງ ສຳນັກງານໃຫຍ່ |
|---|---|---|---|
| ຍອດຍົກມາໃນວັນທີ 1 ມັງກອນ 2019 | 101,650,000,000 | (4,632,652,686) | 97,017,347,314 |
| ລວມຜົນກຳໄລອື່ນ ສຸດທິ | - | 1,654,097,327 | 1,654,097,327 |
| ຍອດເຫຼືອທ້າຍໃນວັນທີ 31 ທັນວາ 2019 | 101,650,000,000 | (2,978,555,359) | 98,671,444,641 |
| ຍອດຍົກມາໃນວັນທີ 1 ມັງກອນ 2020 | 101,650,000,000 | (2,978,555,359) | 98,671,444,641 |
| ລວມຜົນກຳໄລອື່ນ ສຸດທິ | - | 2,666,366,611 | 2,666,366,611 |
| ຍອດເຫຼືອທ້າຍໃນວັນທີ 31 ທັນວາ 2020 | 101,650,000,000 | (312,188,748) | 101,337,811,252 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານກະແສເງິນສົດ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2020

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | 2020 | 2019 |
|---|---|---|---|
| ກະແສເງິນສົດຈາກ ກິດຈະກຳການດຳເນີນງານ | | | |
| ກຳໄລກ່ອນລາຍຮັບອາກອນກຳໄລ | | 3,047,098,844 | 1,649,265,946 |
| ດັດແກ້ເພື່ອສົມທຽບລາຍຮັບສຸດທິປະຈຳປີ | | | |
| ເງິນສົດຮັບ (ຈ່າຍ) ຈາກກິດຈະກຳການດຳເນີນງານ: | | | |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມ | 8 | 1,287,980,397 | 585,832,723 |
| ລາຍຈ່າຍ/ (ເກັບຄືນ) ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ | 9 | (128,148,632) | 2,249,475 |
| ຂາດທຶນຈາກອັດຕາແລກປ່ຽນ ທີ່ຍັງບໍ່ເກີດຂຶ້ນ | 15.2 | 6,253,839 | 17,881,278 |
| ລາຍຮັບດອກເບ້ຍ | | (3,384,232,306) | (3,467,790,063) |
| ລາຍຈ່າຍດອກເບ້ຍ | | 469,750,344 | 323,921,384 |
| ເງິນສົດທີ່ໄດ້ຈາກການດຳເນີນງານ | | 1,298,702,486 | (888,639,257) |
| ຮັບດອກເບ້ຍ | | 2,624,272,066 | 3,556,780,207 |
| ຈ່າຍດອກເບ້ຍ | | (265,017,390) | (324,660,313) |
| ຈ່າຍອາກອນກຳໄລ | 10 | (401,288,762) | - |
| ກຳໄລຈາກການດຳເນີນງານ | | | |
| ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນດຳເນີນງານ | | 3,256,668,400 | 2,343,480,637 |
| ການປ່ຽນແປງຂອງຊັບສິນ ແລະ ໜີ້ສິນດຳເນີນງານ: | | | |
| ການຫຼຸດລົງ (ເພີ່ມຂຶ້ນ) ຂອງຊັບສິນດຳເນີນງານ: | | | |
| ບັນຊີລະຫວ່າງທະນາຄານ ແລະ ລາຍການໃນຕະຫຼາດເງິນ | | (48,573,258,215) | (4,982,741,785) |
| ເງິນຝາກຕາມລະບຽບການ | | (1,892,397,835) | 87,805,377 |
| ລູກໜີ້ສາຂາອື່ນ | | (21,133,622,326) | 19,717,603,546 |
| ເງິນໃຫ້ກູ້ຢືມແກ່ລູກຄ້າ | | 10,157,899,521 | (1,677,562,857) |
| ຊັບສິນອື່ນໆ | | 57,554,151 | 611,647,969 |
| ການເພີ່ມຂຶ້ນ (ຫຼຸດລົງ) ຂອງໜີ້ສິນດຳເນີນງານ: | | | |
| ເງິນຝາກຈາກລູກຄ້າ | | 20,110,024,032 | 1,806,017,261 |
| ເຈົ້າໜີ້ສາຂາອື່ນ | | (1,783,760,000) | (1,818,250,000) |
| ໜີ້ສິນອື່ນໆ | | 17,281,820 | 29,725,602 |
| ເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການດຳເນີນງານ | | (39,783,610,452) | 16,117,725,750 |

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ

ໃບລາຍງານກະແສເງິນສົດ (ຕໍ່)

ສຳລັບປີສິ້ນສຸດວັນທີ 31 ທັນວາ 2020

ຫົວໜ່ວຍ : ກີບ

| | ບົດອະທິບາຍ ເລກທີ | 2020 | 2019 |
|---|---|---|---|
| ກະແສເງິນສົດຈາກກິດຈະກຳການລົງທຶນ | | | |
| ລາຍຈ່າຍໃນການຊື້ເງິນລົງທຶນ | | - | (20,000,000,000) |
| ລາຍຮັບຈາກການໄຖ່ເງິນລົງທຶນ | | 20,000,000,000 | 20,000,000,000 |
| ລາຍຈ່າຍໃນການຊື້ຊັບສົມບັດຄົງທີ່ມີຕົວຕົນ | 11.2 | (203,285,977) | - |
| ລາຍຈ່າຍໃນການຊື້ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 11.2 | (126,655,472) | - |
| ເງິນສົດສຸດທິຈາກກິດຈະກຳການລົງທຶນ | | 19,670,058,551 | - |
| ກະແສເງິນສົດຈາກກິດຈະກຳທາງການເງິນ | | - | - |
| ເພີ່ມຂຶ້ນ (ຫຼຸດລົງ) ສຸດທິຂອງ ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | (20,113,551,901) | 16,117,725,750 |
| ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ | | 32,010,844,095 | 15,893,118,345 |
| ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ | | 11,897,292,194 | 32,010,844,095 |
| ເງິນສົດ ແລະ ທຽບເທົ່າເງິນສົດ | | | |
| ເງິນສົດໃນກຳມື | 11.1 | 1,733,199,345 | 4,301,854,875 |
| ເງິນຝາກຢູ່ ທຫລ | 4.4 | 10,164,092,849 | 27,708,989,220 |
| | | 11,897,292,194 | 32,010,844,095 |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເປັນສ່ວນປະກອບຂອງລາຍງານການເງິນນີ້

1. ຂໍ້ມູນທົ່ວໄປຂອງສາຂາ

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ("ທະນາຄານ") ແມ່ນທະນາຄານທີ່ສ້າງຂຶ້ນແລະດຳເນີນທຸລະກິດຢູ່ໃນປະເທດໄທ. ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) - ສາຂາປາກເຊ ("ສາຂາ") ແມ່ນສາຂາໜຶ່ງຂອງທະນາຄານເຊິ່ງໄດ້ດຳເນີນທຸລະກິດຢູ່ໃນ ສປປ ລາວ ແລະໄດ້ຮັບໃບອະນຸຍາດຈາກທະນະຄານແຫ່ງ ສປປ ລາວ ("ທຫລ") ຕາມໃບອະນຸຍາດເລກທີ 40/ທຫລ ລົງວັນທີ 10 ທັນວາ 2015. ສາຂາເລີ່ມຕົ້ນດຳເນີນທຸລະກິດໃຫ້ບໍລິການລວມດ້ານທະນາຄານ ແລະ ການບໍລິການທີ່ກ່ຽວຂ້ອງກັບການບໍລິການທຸລະກຳທາງດ້ານການເງິນ ໃນ ສປປ ລາວ ໃນວັນທີ 5 ມັງກອນ 2016.

ເອກະສານລາຍງານການເງິນເຫຼົ່ານີ້ໄດ້ຮັບການອະນຸມັດ ແລະອະນຸຍາດໃຫ້ອອກເຜີຍແຜ່ໂດຍຜູ້ບໍລິຫານສາຂາ ໃນວັນທີ 30 ມີນາ 2021.

2. ພື້ນຖານໃນການນຳສະເໜີແລະການກະກຽມເອກະສານລາຍງານທາງການເງິນ

2.1 ພື້ນຖານໃນການນຳສະເໜີແລະການກະກຽມເອກະສານລາຍງານທາງການເງິນ

ສາຂາບໍ່ແມ່ນນິຕິບຸກຄົນທີ່ແຍກອອກຕ່າງຫາກຈາກສຳນັກງານໃຫຍ່, ເອກະສານລາຍງານການເງິນນີ້ແມ່ນໄດ້ກະກຽມຈາກການບັນທຶກຂອງສາຂາ ແລະ ສະທ້ອນໃຫ້ເຫັນພຽງລາຍການທີ່ໄດ້ບັນທຶກໃນສາຂາ ເທົ່ານັ້ນ.

ເອກະສານລາຍງານການເງິນຂອງສາຂາ ແມ່ນໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີຕາມບົດອະບາຍເລກທີ 3. ນະໂຍບາຍການບັນຊີດັ່ງກ່າວແມ່ນອີງຕາມມາດຕະຖານການລາຍງານທາງດ້ານການເງິນສາກົນ ("IFRSs"). ເຖິງຢ່າງໃດກໍຕາມ ການກະກຽມເອກະສານລາຍງານການເງິນດັ່ງກ່າວ ບໍ່ແມ່ນເອກະສານລາຍງານການເງິນທີ່ຄົບຖ້ວນຕາມວັດຖຸປະສົງໂດຍທົ່ວໄປທີ່ໄດ້ຖືກກະກຽມໂດຍສອດຄ່ອງກັບມາດຕະຖານ IFRS ເນື່ອງຈາກວ່າ ສາຂາບໍ່ໄດ້ຖືປະຕິບັດຕາມມາດຕະຖານລາຍງານການເງິນສາກົນ ເລກທີ 9 - ເຄື່ອງມືທາງການເງິນ ຕາມໜັງສືແຈ້ງການເລກທີ 1659/ທຫລ ລົງວັນທີ 14 ທັນວາ 2018 ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020.

ເອກະສານລາຍງານທາງການເງິນນີ້ແມ່ນໄດ້ກະກຽມຕາມຫຼັກການຄົງຄ້າງ ພາຍໃຕ້ຫຼັກການການບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມ, ທີ່ໄດ້ເປີດເຜີຍໄວ້ໃນນະໂຍບາຍການບັນຊີທີ່ສຳຄັນ (ຕາມບົດອະບາຍເລກທີ 3).

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນ ເພື່ອສະໜອງຂໍ້ມູນສຳລັບໃຊ້ ໂດຍສາຂາທະນາຄານ, ສຳນັກງານໃຫຍ່ ແລະ ທະນາຄານ ແຫ່ງ ສປປ ລາວ.

ເອກະສານລາຍງານການເງິນຂອງສາຂາໄດ້ນຳສະເໜີເປັນເງິນກີບ, ເຊິ່ງເປັນສະກຸນເງິນທີ່ສາຂາໄດ້ນຳສະເໜີ.

2.2 ມາດຕະຖານສາກົນດ້ານການລາຍງານທາງການເງິນທີ່ກະທົບຕໍ່ການລາຍງານແລະການເປີດເຜີຍຂໍ້ມູນໃນບົດລາຍງານທາງການເງິນຂອງປີການບັນຊີປະຈຸບັນ

<u>ມາດຕະຖານສາກົນດ້ານການລາຍງານທາງການເງິນ ສະບັບທີ 16 ເລື່ອງ ສັນຍາເຊົ່າ ("IFRS 16")</u>

ສາຂາໄດ້ຈັດຕັ້ງປະຕິບັດຕາມ IFRS 16 ໂດຍບໍ່ໄດ້ດັດແກ້ຄືນຂອງຂໍ້ມູນຫຼັງທີ່ໃຊ້ໃນການສົມທຽບແລະຮັບຮູ້ຜົນກະທົບສະສົມນັບຈາກວັນທີ່ເລີ່ມນຳ IFRS 16 ມາຈັດຕັ້ງປະຕິບັດໃນວັນທີ 1 ມັງກອນ 2020.

ຕາຕະລາງລຸ່ມນີ້ເປັນການສະແດງເຖິງພາລະຜູກພັນຈາກສັນຍາເຊົ່າດຳເນີນງານທີ່ເປີດເຜີຍຕາມມາດຕະຖານການບັນຊີ ສະບັບທີ 17 ເລື່ອງ ສັນຍາເຊົ່າ ໃນວັນທີ 31 ທັນວາ 2019, ໂດຍຄິດໄລ່ສ່ວນຫຼຸດດ້ວຍອັດຕາດອກເບ້ຍການກູ້ຢືມສ່ວນເພີ່ມໃນວັນທີເລີ່ມຕົ້ນຈັດຕັ້ງປະຕິບັດ ແລະ ໜີ້ສິນຕາມສັນຍາເຊົ່າຮັບຮູ້ໃນບົດລາຍງານຖານະທາງການເງິນໃນວັນທີເລີ່ມຕົ້ນຈັດຕັ້ງປະຕິບັດ.

ຜົນກະທົບທີ່ມີຕໍ່ບົດລາຍງານຖານະທາງການເງິນໃນວັນທີ 1 ມັງກອນ 2020 ຈາກການປ່ຽນແປງນະໂຍບາຍການບັນຊີເນື່ອງຈາກການຈັດຕັ້ງປະຕິບັດຕາມ IFRS 16 ມີດັ່ງລຸ່ມນີ້:

| | ໃນວັນທີ 31 ທັນວາ 2019 | ຜົນກະທົບຈາກມາດຕະຖານສາກົນດ້ານການລາຍງານການເງິນ ສະບັບທີ 16 | ໃນວັນທີ 1 ມັງກອນ 2020 |
|---|---|---|---|
| | ກີບ | ກີບ | ກີບ |
| ຊັບສິນ | | | |
| ອາຄານ ແລະ ອຸປະກອນ | 2,189,795,596 | 3,782,851,333 | 5,972,646,929 |
| ຊັບສິນອື່ນໆ | 4,009,737,754 | (3,782,851,333) | 226,886,421 |

ໃນການເລີ່ມຕົ້ນຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນສະບັບທີ 16 ສາຂາຮັບຮູ້ໜີ້ສິນຕາມສັນຍາເຊົ່າ ສຳລັບສັນຍາເຊົ່າທີ່ເຄີຍຈັດປະເພດເປັນສັນຍາເຊົ່າດຳເນີນງານດ້ວຍມູນຄ່າປັດຈຸບັນຂອງຍອດເງິນຄົງເຫຼືອຈ່າຍຊຳລະຕາມສັນຍາເຊົ່າ ຄິດໄລ່ສ່ວນຫຼຸດດ້ວຍອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມຂອງສາຂາໃນວັນທີ 1 ມັງກອນ 2020 ດັ່ງລຸ່ມນີ້:

| | ກີບ |
|---|---|
| ພາລະຜູກພັນຕາມສັນຍາເຊົ່າດຳເນີນງານ ໃນວັນທີ 31 ທັນວາ 2019 | 3,782,851,333 |
| ຫັກ ຄ່າເຊົ່າຈ່າຍລ່ວງໜ້າ | (3,782,851,333) |
| ໜີ້ສິນຕາມສັນຍາເຊົ່າໃນວັນທີ 1 ມັງກອນ 2020 | - |

ລາຍການດັດແກ້ສິດນຳໃຊ້ຊັບສິນຕາມສັນຍາເຊົ່າ ທີ່ເກີດຈາກການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ສະບັບທີ 16 ໃນວັນທີ 1 ມັງກອນ 2020 ມີດັ່ງລຸ່ມນີ້:

| | ກີບ |
|---|---|
| ອາຄານສຳນັກງານ | 3,782,851,333 |

## 3. ນະໂຍບາຍການບັນຊີທີ່ສຳຄັນ

### 3.1 ການຮັບຮູ້ລາຍຮັບ

ສາຂາຮັບຮູ້ລາຍຮັບດອກເບ້ຍ ແລະ ຄ່າທຳນຽມຕາມຫຼັກການຄົງຄ້າງ, ຍົກເວັ້ນລາຍຮັບດອກເບ້ຍຈາກເງິນກູ້ຢືມໃຫ້ລູກຄ້າທີ່ຄ້າງຊຳລະເກີນສາມເດືອນ, ລາຍຮັບດອກເບ້ຍທີ່ຄ້າງຊຳລະດັ່ງກ່າວຈະຖືກຮັບຮູ້ ເມື່ອມີການຊຳລະ. ສາຂາຈະລ້າງລາຍການດອກເບ້ຍຄ້າງຊຳລະທັງໝົດດັ່ງກ່າວໂດຍຮັບຮູ້ລາຍຮັບທີ່ບໍ່ແນ່ນອນຢູ່ໃນຫຼັກການບັນຊີຄົງຄ້າງ.

ສາຂາຮັບຮູ້ຄ່າທຳນຽມຕາມຫຼັກການຄົງຄ້າງເມື່ອໄດ້ມີການໃຫ້ບໍລິການ ຫຼື ດຳເນີນງານຕາມພາລະທີ່ຕ້ອງປະຕິບັດສິ້ນສຸດ.

### 3.2 ການຮັບຮູ້ລາຍຈ່າຍ

ລາຍຈ່າຍ ແລະ ຄ່າທຳນຽມຈ່າຍ ສາຂາ ແມ່ນຮັບຮູ້ຕາມຫຼັກການຄົງຄ້າງ.

### 3.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ ເງິນຝາກທີ່ມີອາຍຸຄົບກຳນົດຕໍ່າກວ່າສາມເດືອນຈາກມື້ທີ່ໄດ້ຝາກລວມເຖິງເງິນສົດໃນກຳມື, ເງິນຝາກໃນທະນາຄານແຫ່ງ ສປປ ລາວ, ເງິນຝາກຢູ່ໃນທະນາຄານອື່ນໆທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການ ແລະ ເງິນລົງທຶນໄລຍະສັ້ນອື່ນ ທີ່ມີສະພາບຄ່ອງສູງ ທີ່ມີກຳນົດເວລາ 3 ເດືອນ ຫຼື ໜ້ອຍກວ່ານັ້ນ.

### 3.4 ເງິນລົງທຶນ

ເງິນລົງທຶນໃນຫລັກຊັບທີ່ຖືຈົນຄົບກຳນົດ ທີ່ທະນາຄານມີຄວາມສາມາດທີ່ຈະຖືໄວ້ຈົນຄົບກຳນົດໄດ້ຖອນຈັດເປັນປະເພດ ຕາສານໜີ້ທີ່ຖືຈົນຄົບກຳນົດ ແລະ ສະແດງດ້ວຍຕົ້ນທຶນຫັກສ່ວນປັບປຸງມູນຄ່າຂອງການສູນເສຍມູນຄ່າ (ຖ້າມີ)

### 3.5 ເງິນໃຫ້ກູ້ຢືມແກ່ລູກຄ້າ

ເມື່ອມີການປ່ອຍເງິນໃຫ້ກູ້ກັບຜູ້ກູ້ຢືມເງິນກູ້ຢືມດັ່ງກ່າວນັ້ນສາຂາບັນທຶກບັນຊີຕາມມູນຄ່າຕົ້ນທຶນ ແລະ ຈະຕັດອອກຈາກບັນຊີເມື່ອໄດ້ຮັບການຊຳລະສະສາງເງິນກູ້ຢືມດັ່ງກ່າວ ຫຼື ເມື່ອມີການລ້າງໜີ້ສູນອອກຈາກບັນຊີ.

ເງິນເບີກເກີນບັນຊີແມ່ນສະແດງດ້ວຍມູນຄ່າທີ່ເບີກເກີນບວກດອກເບ້ຍຄ້າງຮັບ. ເງິນໃຫ້ກູ້ຢືມແກ່ລູກຄ້າອື່ນໆ ແມ່ນສະແດງຕາມຍອດຕົ້ນທຶນກູ້ຢືມ.

### 3.6 ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ

ການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ຕ້ອງຮັບທວງຍາກຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນອີງຕາມລະບຽບຂອງທະນາຄານ ແຫ່ງ ສປປ ລາວ ມາດຕາ 9, ເລກທີ 512/ທຫລ ລົງວັນທີ 29 ມິຖຸນາ 2018. ການຈັດຊັ້ນໜີ້ນີ້ ແມ່ນຖືເປັນແນວທາງເພື່ອຊ່ວຍໃຫ້ສາຂາ ໃນການຄາດຄະເນການຕັ້ງສຳຮອງເງິນແຮ ສຳຫຼັບໜີ້ສູນໃຫ້ເໝາະສົມດັ່ງລຸ່ມນີ້:

| ປະເພດຂອງໜີ້ | ຈຳນວນມື້ຕາມການກຳນົດ | ອັດຕາເງິນແຮ (ເລກທີ 512/ທຫລ) | ອັດຕາເງິນແຮ (ສາຂາ) |
|---|---|---|---|
| ໜີ້ປົກກະຕິ | 1 ເຖິງ 30 ມື້ | 0.50% | 1.20%* |
| ໜີ້ຄວນເອົາໃຈໃສ່ | 31 ເຖິງ 90 ມື້ | 3.00% | 3.00% |
| ໜີ້ຕໍ່າກວ່າມາດຕະຖານ | 91 ເຖິງ 180 ມື້ | 20.00% | 20.00% |
| ໜີ້ສົງໄສຈະສູນ | 181 ເຖິງ 360 ມື້ | 50.00% | 50.00% |
| ໜີ້ສູນ | ຫຼາຍກວ່າ 360 ມື້ | 100.00% | 100.00% |

* ສາຂາໄດ້ນຳໃຊ້ອັດຕາສຳຮອງໜີ້ສູນຂອງສຳນັກງານໃຫຍ່ວາງອອກໃນອັດຕາ 1.20%, ເຊິ່ງໄດ້ຮັບການຮັບຮອງຈາກທະນາຄານ ແຫ່ງ ສປປ ລາວ ຕາມໜັງສືອະນຸຍາດທີ່ເປັນທາງການ ເລກທີ 37/ທຫລ ລົງວັນທີ 30 ມັງກອນ 2014.

ສ່ວນປ່ຽນແປງເງິນແຮສຳລັບໜີ້ຕ້ອງຮັບທວງຍາກແມ່ນໄດ້ບັນທຶກໄວ້ໃນໃບສະຫຼຸບຜົນໄດ້ຮັບ ແລະ ຜົນໄດ້ຮັບສຸດທິອື່ນເປັນລາຍຈ່າຍເງິນແຮໜີ້ຕ້ອງຮັບທວງຍາກ ຫຼື ລາຍການເກັບຄືນເງິນແຮໜີ້ຕ້ອງຮັບທວງຍາກ. ສ່ວນບັນຊີເງິນແຮສຳລັບໜີ້ຕ້ອງຮັບທວງຍາກສະສົມແມ່ນໄດ້ບັນທຶກໄວ້ໃນໃບລາຍງານຖານະການເງິນ ເປັນບັນຊີເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ທີ່ນຳໄປຫັກອອກຈາກບັນຊີເງິນໃຫ້ກູ້ຢືມແກ່ລູກຄ້າ.

### 3.7 ອາຄານ ແລະ ອຸປະກອນ

ອາຄານ ແລະ ອຸປະກອນ ແມ່ນສະແດງໃນລາຄາຕົ້ນທຶນລົບດ້ວຍ ຄ່າຫຼຸ້ຍຫ້ຽນສະສົມ ແລະຄ່າເຊື່ອມມູນຄ່າ (ຖ້າມີ).

ຄ່າຫຼຸ້ຍຫ້ຽນແມ່ນຄິດໄລ່ແບບເສັ້ນຊື່ ຕາມອັດຕາຄ່າຫຼຸ້ຍຫ້ຽນທີ່ກຳນົດໄວ້ໃນກົດໝາຍອາກອນ

| | |
|---|---|
| ສ່ວນປັບປຸງອາຄານເຊົ່າ | 20 ປີ |
| ເຟີນີເຈີ້ ແລະ ສິ່ງຕິດຕັ້ງ | 5 ປີ |
| ອຸປະກອນຄອມພິວເຕີ | 5 ປີ |

ເມື່ອ ອາຄານ ແລະ ອຸປະກອນມີການເຊື່ອມມູນຄ່າລົງ, ຄ່າເຊື່ອມມູນຄ່າດັ່ງກ່າວແມ່ນໄດ້ຮັບຮູ້ເປັນຂາດທຶນຈາກຄ່າເຊື່ອມມູນຄ່າໂດຍສະແດງເປັນລາຍຈ່າຍອື່ນໆໃນການດຳເນີນງານ.

ກຳໄລ ຫຼື ຂາດທຶນຈາກການຂາຍອາຄານ ແລະ ອຸປະກອນ ແມ່ນບັນທຶກເປັນລາຍຮັບອື່ນຫຼື ລາຍຈ່າຍອື່ນໃນການດຳເນີນງານເມື່ອມີການຂາຍ

### 3.8 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນ ແມ່ນສະແດງໃນລາຄາຕົ້ນທຶນລົບດ້ວຍຄ່າຫຼຸ້ຍຫ້ຽນສະສົມ ແລະຄ່າເຊື່ອມມູນຄ່າ (ຖ້າມີ).

ຄ່າຫຼຸ້ຍຫ້ຽນແມ່ນຄິດໄລ່ແບບເສັ້ນຊື່ ຕາມອັດຕາຄ່າຫຼຸ້ຍຫ້ຽນທີ່ກຳນົດໄວ້ໃນກົດໝາຍອາກອນ.

| | |
|---|---|
| ໂປແກຼມຄອມພິວເຕີ | 2 - 5 ປີ |

ເມື່ອຊັບສິນບັດຄົງທີ່ບໍ່ມີຕົວຕົນມີການເຊື່ອມມູນຄ່າລົງ, ຕ້ອງໄດ້ມີການຫັກຄ່າເຊື່ອມມູນຄ່າເພື່ອບັນທຶກຂາດທຶນຈາກຄ່າເຊື່ອມມູນຄ່າເປັນລາຍຈ່າຍອື່ນໆໃນການດຳເນີນງານ.

ກຳໄລ ຫຼື ຂາດທຶນໃນການຂາຍຊັບສິນບັດຄົງທີ່ບໍ່ມີຕົວຕົນແມ່ນບັນທຶກເປັນລາຍຮັບອື່ນຫຼື ລາຍຈ່າຍອື່ນໃນການດຳເນີນງານເມື່ອມີການຂາຍ.

### 3.9 ສັນຍາເຊົ່າ

ສາຂາໃນຖານະຜູ້ເຊົ່າ ຮັບຮູ້ໜີ້ສິນຕາມສັນຍາເຊົ່າດ້ວຍມູນຄ່າປັດຈຸບັນຂອງພາລະຜູກພັນຕາມສັນຍາເຊົ່າ ແລະ ຮັບຮູ້ສິດນຳໃຊ້ຊັບສິນຕາມສັນຍາເຊົ່າດ້ວຍມູນຄ່າຂອງໜີ້ສິນຕາມສັນຍາເຊົ່າບວກຕົ້ນທຶນທາງກົງໃນເບື້ອງຕົ້ນ ແລະ ຕັດຄ່າຫຼຸ້ຍຫ້ຽນຂອງສິດນຳໃຊ້ຊັບສິນຕາມສັນຍາເຊົ່າແບບເສັ້ນຊື່ຕະຫຼອດອາຍຸຂອງສັນຍາເຊົ່າ

### 3.10 ລາຍຈ່າຍອາກອນກຳໄລ

ອາກອນກຳໄລ (ຖ້າມີ) ປະກອບດ້ວຍ ອາກອນກຳໄລໃນປີປະຈຸບັນ ແລະ ອາກອນກຳໄລເລື່ອນຊຳລະ.

ອາກອນກຳໄລໃນປີສະແດງຕາມຈຳນວນທີ່ຄາດວ່າຈະຈ່າຍຫຼືຄາດວ່າຈະເກັບຄືນໄດ້ຈາກກົມສ່ວຍສາອາກອນຈາກການຄິດໄລ່ອາກອນກຳໄລຫຼືຂາດທຶນພາຍໃນງວດຕາມອັດຕາອາກອນກຳໄລທີ່ປະກາດໃຊ້ຫຼືມີຜົນສັກສິດໃຫ້ນຳໃຊ້ໃນມື້ທີ່ອອກບົດລາຍງານທາງການເງິນນັ້ນ.

ອາກອນກຳໄລເຍື້ອນຊຳລະຮັບຮູ້ຈາກສ່ວນຕ່າງຊົ່ວຄາວທີ່ເກີດຂຶ້ນລະຫວ່າງມູນຄ່າຂອງຊັບສິນ ແລະ ໜີ້ສິນໃນເອກະສານລາຍງານການເງິນ ແລະ ວິທີຄິດໄລ່ອາກອນກຳໄລຕາມລະບຽບການດ້ານອາກອນ (ໄລ່ຕາມອາກອນ). ທະນາຄານຮັບຮູ້ ຊັບສິນ ແລະ ໜີ້ສິນ ອາກອນກຳໄລເຍື້ອນຊຳລະທີ່ເກີດຈາກສ່ວນຕ່າງຊົ່ວຄາວນັ້ນ ຕາມຈຳນວນທີ່ຄາດວ່າຈະໄດ້ຮັບຈາກຊັບສິນອາກອນກຳໄລເຍື້ອນຊຳລະ ຫຼື ຈະໄດ້ຊຳລະ ຈາກໜີ້ສິນອາກອນກຳໄລເຍື້ອນຊຳລະ ໃນກຳໄລ ຫຼື ຂາດທຶນ ຍົກເວັ້ນແຕ່ສ່ວນທີ່ກ່ຽວກັບລາຍການທີ່ໄດ້ຮັບຮູ້ຢູ່ໃນສ່ວນຂອງຜູ້ຖືຫຸ້ນແລ້ວ, ໃນກໍລະນີນີ້ຈະຕ້ອງຮັບຮູ້ໂດຍກົງໃນສ່ວນຂອງຜູ້ຖືຫຸ້ນ.

ຊັບສິນ ແລະ ໜີ້ສິນ ອາກອນລາຍໄດ້ເຍື້ອນຊຳລະຈະຫັກລ້າງກັນກໍ່ຕໍ່ເມື່ອສາຂາມີສິດຕາມກົດໝາຍທີ່ຈະນຳຊັບສິນ ແລະ ໜີ້ສິນທາງອາກອນໃນງວດປະຈຸບັນມາຫັກລ້າງກັນແລະເມື່ອ ຊັບສິນ ແລະ ໜີ້ສິນອາກອນລາຍໄດ້ເຍື້ອນຊຳລະກ່ຽວພັນກັບອາກອນທີ່ຮຽກເກັບໂດຍເຈົ້າໜ້າທີ່ອາກອນດຽວກັນຢູ່ໜ່ວຍງານຈັດເກັບດຽວກັນ.

ຊັບສິນອາກອນເຍື້ອນຊຳລະຈະຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຕ້ອງຖືກເສຍອາກອນຈະມີພຽງພໍໃຫ້ນຳມາໃຊ້ຫັກລ້າງກັບສ່ວນຕ່າງຊົ່ວຄາວທາງດ້ານອາກອນ. ຍອດເຫຼືອຕາມບັນຊີຂອງຊັບສິນອາກອນເຍື້ອນຊຳລະຈະຖືກກວດກາຄືນໃນແຕ່ລະມື້ລາຍງານ ແລະ ປັບລົງຈົນກວ່າຜົນປະໂຫຍດທາງດ້ານອາກອນຈະເກີດຂຶ້ນ.

### 3.11 ປະມານການໜີ້ສິນ

ປະມານການໜີ້ສິນ ແມ່ນຖືກຮັບຮູ້ເມື່ອສາຂາ ມີ ພາລະຜູກພັນໃນປະຈຸບັນ (ທາງກົດໝາຍ ຫຼື ຄວາມໝາຍເປັນໃນໆ) ເຊິ່ງເປັນຜົນມາຈາກເຫດການທີ່ເກີດຂຶ້ນໃນອະດີດ ແລະມີຄວາມເປັນໄປໄດ້ຄ່ອນຂ້າງແນ່ນອນວ່າ ສາຂາຈະຕ້ອງຈ່າຍຊຳລະໃນພາລະຜູກພັນ ແລະ ສາມາດປະມານຄ່າທີ່ແນ່ນອນໄດ້ຈາກຈຳນວນພາລະຜູກພັນ. ສາຂາຈະບໍ່ຮັບຮູ້ປະມານການໜີ້ສິນເຂົ້າໃນຂາດທຶນຈາກການດຳເນີນທຸລະກິດໃນອະນາຄົດ.

ສາຂາຮັບຮູ້ປະມານການໜີ້ສິນເປັນລາຍຈ່າຍໃນການດຳເນີນງານອື່ນໆ ແລະ ເປັນໜີ້ສິນໃນໃບລາຍງານຖານະການເງິນ.

ສາຂາທຳການກວດຄືນປະມານການໜີ້ສິນເປັນປະຈຳ ແລະຮັບຮູ້ສ່ວນປ່ຽນແປງຂອງປະມານການໜີ້ສິນເປັນສ່ວນເພີ່ມຂຶ້ນຫຼືສ່ວນຫຼຸດລົງຂອງລາຍຈ່າຍໃນການດຳເນີນງານອື່ນໆ.

### 3.12 ຂໍ້ມູນກ່ຽວກັບພາກສ່ວນທຸລະກິດ

ສາຂາດຳເນີນທຸລະກິດຢູ່ພາຍໃຕ້ພາກສ່ວນທຸລະກິດດຽວ ເຊິ່ງແມ່ນພາກສ່ວນທຸລະກິດທະນາຄານ, ແລະ ມີໜຶ່ງພູມສັນຖານຕັ້ງຢູ່ພາຍໃນ ສປປ ລາວ.

### 3.13 ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ

ລາຍການຕ່າງໆທີ່ສະແດງໃນເອກະສານລາຍງານການເງິນເຫຼົ່ານີ້ແມ່ນຖືກຮັບຮູ້ເປັນສະກຸນເງິນກີບ.

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນຖືກປ່ຽນຄ່າໃຫ້ເປັນສະກຸນເງິນກີບໂດຍນຳໃຊ້ອັດຕາແລກປ່ຽນໃນວັນທີ ທີ່ມີລາຍການນັ້ນເກີດຂຶ້ນ. ຍອດຄົງເຫຼືອຂອງຊັບສິນ ແລະ ໜີ້ສິນ ທີ່ສະແດງໄວ້ໃນໃບລາຍງານຖານະການເງິນ ໃນມື້ລາຍງານ ແລະ ລາຍຮັບ ແລະ ລາຍຈ່າຍທີ່ສະແດງໃນໃບລາຍງານຜົນການດຳເນີນງານທີ່ມີມູນຄ່າເປັນເງິນຕາຕ່າງປະເທດ ແມ່ນຖືກປ່ຽນໃຫ້ເປັນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນຂອງ ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ໃນວັນທີລາຍງານ.

ກຳໄລ ຫຼື ຂາດທຶນ ທີ່ເກີດຈາກການຊຳລະທຸລະກຳຕ່າງໆ ຫຼື ເກີດຈາກລາຍການແລກປ່ຽນເງິນຕາຕ່າງປະເທດແມ່ນຖືກຮັບຮູ້ໃນໃບສະຫຼຸບຜົນໄດ້ຮັບ ແລະ ຜົນໄດ້ຮັບສຸດທິອື່ນ.

### 3.14 ການໃຊ້ດຸນພິນິດ ຂອງຜູ້ບໍລິຫານ

ການກະກຽມເອກະສານລາຍງານທາງການເງິນທີ່ສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບມາດຕະຖານການລາຍງານການເງິນສາກົນ ແມ່ນໄດ້ກຳນົດໃຫ້ຜູ້ບໍລິຫານຂອງສາຂາຕ້ອງນຳໃຊ້ດຸນພິນິດຕ່າງໆ ເພື່ອພິຈາລະນາການນຳໃຊ້ນະໂຍບາຍບັນຊີ, ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດຖານທີ່ມີຜົນຕໍ່ກັບການລາຍງານ ຈຳນວນຂອງຊັບສິນ ແລະ ໜີ້ສິນລວມທັງການເປີດເຜີຍພາລະຜູກພັນທາງດ້ານ ຊັບສິນ ແລະ ໜີ້ສິນທີ່ມີໃນວັນທີ່ໄລຍະເວລາລາຍງານ ແລະ ການລາຍງານຈຳນວນລາຍຮັບ ແລະ ລາຍຈ່າຍ ໃນໄລຍະເວລາລາຍງານ. ເຖິງແມ່ນວ່າ ການຄາດຄະເນເຫຼົ່ານີ້ແມ່ນສ້າງຂຶ້ນບົນພື້ນຖານການພິຈາລະນາທີ່ສົມເຫດສົມຜົນຂອງຜູ້ບໍລິຫານຕໍ່ກັບສະຖານະການໃນປັດຈຸບັນ, ຕົວເລກທີ່ເກີດຂຶ້ນຈິງອາດມີຄວາມຄາດເຄື່ອນຈາກຕົວເລກທີ່ໄດ້ຄາດຄະເນໄວ້.

## 4. ການບໍລິຫານຄວາມສ່ຽງທາງດ້ານການເງິນ

ທຸລະກິດຂອງສາຂາມີຄວາມສ່ຽງໃນລັກສະນະທີ່ກຳນົດໄວ້ ແລະ ມີການບໍລິຫານງານແບບມືອາຊີບເຊິ່ງໄດ້ສະແດງໄວ້ໃນງົບການເງິນລວມຂອງທະນາຄານ ແລະ ຂອງສາຂາເອງ ເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງໜ່ວຍງານທ້ອງຖິ່ນທີ່ຄຸ້ມຄອງສາຂາ.

ໃນລະດັບສາຂາ, ໜ້າທີ່ຫຼັກໃນການບໍລິຫານຈັດການຄວາມສ່ຽງຂອງສາຂາ ແມ່ນຊອກຫາຄວາມສ່ຽງທັງໝົດຂອງສາຂາ, ວັດຄວາມສ່ຽງເຫຼົ່ານີ້, ຈັດການຕຳແໜ່ງຄວາມສ່ຽງ ແລະ ການກຳນົດການຈັດສັນເງິນທຶນ. ສາຂາແມ່ນໄດ້ປະຕິບັດຕາມນະໂຍບາຍການບໍລິຫານຄວາມສ່ຽງຂອງທະນາຄານ.

ຈຸດປະສົງຂອງສາຂາແມ່ນເພື່ອໃຫ້ເກີດຄວາມສົມດຸນທີ່ເໝາະສົມລະຫວ່າງຄວາມສ່ຽງ ແລະ ຜົນຕອບແທນ ແລະ ຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນກັບຜົນປະກອບການທາງດ້ານການເງິນຂອງສາຂາ.

ສາຂາໄດ້ປະເມີນຄວາມສ່ຽງທີ່ອາດເປັນໄປໄດ້ທີ່ເກີດການຂາດທຶນ ຫຼື ກຳໄລຫລຸດລົງ, ຊຶ່ງອາດຈະເກີດຈາກປັດໃຈພາຍໃນຫຼືພາຍນອກ.

ໃນລະດັບທະນາຄານ, ຄະນະກຳມະການບໍລິຫານຄວາມສ່ຽງ ມີໜ້າທີ່ສຳຄັນທີ່ສຸດ ໃນການກຳນົດນະໂຍບາຍຕ່າງໆໃນການບໍລິຫານຄວາມສ່ຽງ, ກວດກາຄືນຄວາມພຽງພໍຂອງນະໂຍບາຍແລະລະບົບຕ່າງໆທີ່ໃຊ້ໃນການບໍລິຫານຄວາມສ່ຽງ, ກຳນົດຍຸດທະສາດໃນການບໍລິຫານຄວາມສ່ຽງ ແລະ ຕິດຕາມກວດກາຄວາມສ່ຽງຂອງທະນາຄານໃຫ້ຢູ່ໃນລະດັບທີ່ເໝາະສົມ ແລະ ສອດຄ່ອງກັບນະໂຍບາຍໃນການບໍລິຫານຄວາມສ່ຽງຂອງທະນາຄານທີ່ໄດ້ຖືກຮັບຮອງໂດຍສະພາຜູ້ບໍລິຫານເຊິ່ງໄດ້ຮັບຄຳແນະນຳຈາກຄະນະກຳມະການບໍລິຫານຄວາມສ່ຽງ. ຈຸດປະສົງຫຼັກແມ່ນເພື່ອຄຸ້ມຄອງຄວາມສ່ຽງໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້ ໂດຍສະເພາະແມ່ນຮັກສາລະດັບຄວາມພຽງພໍຂອງທຶນໃຫ້ສອດຄ່ອງກັບລະບຽບໃນການຮັກສາຄວາມພຽງພໍຂອງທຶນທີ່ປັບປຸງໃໝ່ຕາມຄຳແນະນຳພາຍໃຕ້ Basel III ເພື່ອໃຫ້ໄດ້ຮັບອັດຕາຜົນຕອບແທນທີ່ເໝາະສົມ.

ຫຼັກການຫຼັກໆໃນລະບົບບໍລິຫານຄວາມສ່ຽງແມ່ນຫົວໜ່ວຍທຸລະກິດຄວນຮັບຜິດຊອບໃນການຄວບຄຸມຜົນກະທົບຂອງຄວາມສ່ຽງຂອງຕົນຢ່າງເປັນປະຈຳເພື່ອໃຫ້ແນ່ໃຈວ່າຄວາມສ່ຽງແມ່ນຢູ່ໃນຂອບເຂດທີ່ກຳນົດ ແລະສອດຄ່ອງກັບນະໂຍບາຍບໍລິຫານຄວາມສ່ຽງໂດຍລວມທີ່ໄດ້ຮັບຮອງໂດຍສະພາຜູ້ບໍລິຫານ ສ່ວນໜ່ວຍງານບໍລິຫານຄວາມສ່ຽງແມ່ນມີໜ້າທີ່ຕິດຕາມກວດກາຄວາມສ່ຽງ ແລະ ຄວບຄຸມຄວາມສ່ຽງຢ່າງເປັນປະຈຳ.

ສາຂາມີຄວາມສ່ຽງທາງດ້ານການເງິນ ເຊິ່ງລວມມີ ຄວາມສ່ຽງດ້ານສິນເຊື່ອ, ຄວາມສ່ຽງທາງດ້ານສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ.

## 4.1 ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງທາງດ້ານສິນເຊື່ອ ແມ່ນຄວາມສ່ຽງຕໍ່ການຂາດທຶນທາງດ້ານການເງິນ ຈາກລູກຄ້າຂອງສາຂາ, ລູກຄ້າ ຫຼືຄູ່ສັນຍາ ທີ່ບໍ່ປະຕິບັດພາລະຜູກພັນຂອງສັນຍາຕໍ່ກັບສາຂາ. ຄວາມສ່ຽງທາງດ້ານສິນເຊື່ອສ່ວນໃຫຍ່ແມ່ນເກີດຂຶ້ນຈາກເງິນໃຫ້ກູ້ຢືມເພື່ອ ການຄ້າ, ການບໍລິໂພກ, ເງິນລ່ວງໜ້າ ແລະ ພາລະຜູກພັນເງິນໃຫ້ກູ້ຢືມທີ່ເກີດຂຶ້ນຈາກກິດຈະກໍາການໃຫ້ກູ້ຢືມ, ແຕ່ຍັງສາມາດເກີດຂຶ້ນຈາກການປັບການໃຫ້ສິນເຊື່ອ, ການຄໍ້າປະກັນທາງການເງິນ, ໜັງສືສິນເຊື່ອ.

ເຖິງຢ່າງໃດກໍຕາມ ສາຂາບໍ່ໄດ້ຢູ່ໃນຖານະທີ່ຈະບໍລິຫານຈັດການຄວາມສ່ຽງທາງດ້ານສິນເຊື່ອສ່ວນໃຫຍ່ດ້ວຍຕົວຂອງສາຂາເອງໄດ້. ເປັນໄດ້ແຕ່ພຽງຝ່າຍການຕະຫຼາດໃຫ້ແກ່ທະນາຄານ ເພື່ອຊອກລູກຄ້າ ແລະ ໃຫ້ໄດ້ລູກຄ້າທີ່ມີສັກກະຍາພາບທີ່ດີ ເພື່ອຮັກສາທັງລູກຄ້າສິນເຊື່ອຄົນເກົ່າ ແລະ ທີ່ກໍາລັງຈະເປັນລູກຄ້າລາຍໃໝ່. ສາຂາເປັນພຽງຕົວແທນໃນທ້ອງຖິ່ນ  ໃຫ້ແກ່ທາງທະນາຄານ ໃນການດໍາເນີນງານທາງດ້ານສິນເຊື່ອ. ສ່ວນເອກະສານໃນການຂໍວົງເງິນສິນເຊື່ອທັງໝົດຂອງສາຂາແມ່ນຖືກສະເໜີ ແລະ ສົ່ງໄປຍັງພະແນກທີ່ກ່ຽວກັບການປ່ອຍສິນເຊື່ອຂອງທະນາຄານ ເພື່ອກະກຽມ, ວິເຄາະ ແລະ ຮ່າງສັນຍາຄໍ້າປະກັນຫຼັກຊັບ. ຫຼັງຈາກໄດ້ຮັບການອະນຸມັດສໍານວນສິນເຊື່ອທັງໝົດຖືກລວບລວມເປັນສໍານວນສິນເຊື່ອຂອງສາຂາແລ້ວສົ່ງໃຫ້ຄະນະກໍາມະການຄຸ້ມຄອງ ແລະ ບໍລິຫານຄວາມສ່ຽງ.

ຄວາມສ່ຽງດ້ານສິນເຊື່ອ ແມ່ນເປັນຄວາມສ່ຽງທີ່ໃຫຍ່ທີ່ສຸດອັນໜຶ່ງສໍາລັບທຸລະກິດທະນາຄານ; ສະນັ້ນ ຜູ້ບໍລິຫານຈະຕ້ອງໄດ້ຫາວິທີຄວບຄຸມຄວາມສ່ຽງດ້ານສິນເຊື່ອ. ການຈັດການແລະຄວບຄຸມຄວາມສ່ຽງດ້ານສິນເຊື່ອແມ່ນມີຈຸດສູນລວມຢູ່ນໍາທີມງານບໍລິຫານຄວາມສ່ຽງ ເຊິ່ງລາຍງານຕໍ່ສະພາຜູ້ອໍານວຍການ ແລະ ຫົວໜ້າໜ່ວຍງານທຸລະກິດເປັນປະຈໍາ.

### 4.1.1 ຜົນຂອງຄວາມສ່ຽງທາງດ້ານສິນເຊື່ອ

ຜົນຄວາມສ່ຽງທາງດ້ານສິນເຊື່ອຕາມຂໍ້ມູນທີ່ໄດ້ສະແດງໄວ້ໃນໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2020 | 2019 |
|---|---|---|
| | ກີບ | ກີບ |
| ເງິນໃຫ້ກູ້ຢືມແກ່ບໍລິສັດຂະໜາດໃຫຍ່ | 5,737,545,000 | 1,820,000,000 |
| ເງິນໃຫ້ກູ້ຢືມແກ່ບຸກຄົນ | - | 14,075,444,521 |
| ລວມ | 5,737,545,000 | 15,895,444,521 |

### 4.1.2 ບັນຫາລວມຂອງຄວາມສ່ຽງຊັບສິນທາງການເງິນ

ກ) ຂະແໜງການທີ່ຕັ້ງຕາມພູມສາດ

ຕະລາງຂ້າງລຸ່ມນີ້ ໄດ້ວິເຄາະສິນເຊື່ອຂອງທະນາຄານຕາມມູນຄ່າທາງບັນຊີ (ໂດຍບໍ່ລວມຫຼັກຊັບຄໍ້າປະກັນໃດໆ ຫຼື ສ່ວນປະກອບອື່ນດ້ານສິນເຊື່ອ), ຈັດປະເພດແຍກຕາມພູມມີສາດ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2020 | 2019 |
|---|---|---|
| | ກີບ | ກີບ |
| ທີ່ຢູ່ອາໄສ | 5,737,545,000 | 15,895,444,521 |
| ລວມ | 5,737,545,000 | 15,895,444,521 |

ຂ) ຂະແໜງອຸດສາຫະກຳ

ຕາມຕະລາງຂ້າງລຸ່ມນີ້ ແມ່ນການສະແດງຄວາມສ່ຽງທີ່ເກີດຂຶ້ນຂອງສາຂາ ຕາມມູນຄ່າທາງບັນຊີ (ໂດຍບໍ່ລວມຫຼັກຊັບຄ້ຳປະກັນໃດໆ ຫຼື ສ່ວນປະກອບອື່ນດ້ານສິນເຊື່ອ), ໂດຍຈັດປະເພດ ຕາມຂະແໜງການອຸດສາຫະກຳຂອງຄູ່ສັນຍາ ໃນວັນທີ 31 ທັນວາ, ມີດັ່ງລຸ່ມນີ້:

| | 2020 | 2019 |
|---|---|---|
| | ກີບ | ກີບ |
| ຂະແໜງ ການຄ້າ | 5,737,545,000 | 1,820,000,000 |
| ຂະແໜງ ກໍ່ສ້າງ | - | 14,075,444,521 |
| ລວມ | 5,737,545,000 | 15,895,444,521 |

## 4.2 ຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ຄວາມສ່ຽງທາງດ້ານອັດຕາດອກເບ້ຍແມ່ນເກີດຈາກຄວາມເປັນໄປໄດ້ທີ່ຈະເກີດມີການປ່ຽນແປງອັດຕາດອກເບ້ຍ ເຊິ່ງຈະສົ່ງຜົນກະທົບທີ່ບໍ່ດີຕໍ່ລາຍຮັບດອກເບ້ຍສຸດທິຂອງທະນາຄານໃນໄລຍະເວລາທີ່ລາຍງານໃນປີປະຈຸບັນ ແລະ/ຫຼື ໃນອານາຄົດ. ຄວາມສ່ຽງທາງດ້ານອັດຕາດອກເບ້ຍເກີດຈາກໂຄງສ້າງແລະລັກສະນະຂອງຊັບສິນ ແລະ ໜີ້ສິນຂອງສາຂາ ແລະ ເກີດຈາກຈຳນວນວັນທີ່ຕ່າງກັນລະຫວ່າງວັນທີ່ຂອງການປັບປ່ຽນດອກເບ້ຍຂອງຊັບສິນແລະໜີ້ສິນ.

ທະນາຄານໄດ້ມີການປະເມີນ, ຕິດຕາມກວດກາ ແລະ ຄວບຄຸມ ຄວາມສ່ຽງທາງດ້ານອັດຕາດອກເບ້ຍເພື່ອໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ ແລະ ເພື່ອປະຕິບັດຕາມນະໂຍບາຍບໍລິຫານຄວາມສ່ຽງທີ່ສ້າງຂຶ້ນໂດຍຄະນະກຳມະການບໍລິຫານ ຊັບສິນ ແລະ ໜີ້ສິນ ແລະ ຄະນະກຳມະການບໍລິຫານຄວາມສ່ຽງຂອງທະນາຄານ. ສາຂາບໍລິຫານ ຄວາມສ່ຽງທາງດ້ານອັດຕາດອກເບ້ຍເພື່ອໃຫ້ໄດ້ຮັບຜົນຕອບແທນຕາມເປົ້າໝາຍທຸລະກິດ ແລະ ເພື່ອຄວບຄຸມ ຜົນກະທົບຕໍ່ທຶນທີ່ອາດເກີດຂຶ້ນໃຫ້ຢູ່ໃນຂອບເຂດທີ່ກຳນົດ.

ສາຂາມີຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນເປັນຈຳນວນຫຼວງຫຼາຍ ແລະ ຈັດປະເພດຕາມອັດຕາດອກເບ້ຍຕາມສັນຍາທີ່ຈະຄົບກຳນົດກ່ອນ ຫຼື ວັນທີຄົບກຳນົດ ໃນວັນທີ 31 ທັນວາ ດັ່ງລາຍລະອຽດລຸ່ມນີ້:

| | 2020 | | | | | | |
|---|---|---|---|---|---|---|---|
| | ເງິນຝາກຮຽກເກັບໄດ້ໃນເວລາທີ່ຕ້ອງການຫາ 1 ເດືອນ | 1 ຫາ 3 ເດືອນ | 3 ຫາ 12 ເດືອນ | 1-5 ປີ | ເກີນ 5 ປີ | ບໍ່ມີດອກເບ້ຍ | ລວມ |
| | ກີບ | ກີບ | ກີບ | ກີບ | ກີບ | ກີບ | ກີບ |
| ຊັບສິນທາງການເງິນ | | | | | | | |
| ບັນຊີລະຫວ່າງທະນາຄານ ແລະ ລາຍການໃນຕະຫຼາດເງິນ | 10,164,092,849 | - | 59,747,120,180 | - | - | - | 69,911,213,029 |
| ລູກໜີ້ສາຂາອື່ນ | 32,150,038,911 | 20,075,000,000 | - | - | - | - | 52,225,038,911 |
| ເງິນຝາກຕາມລະບຽບການ | - | - | - | - | - | 2,302,910,074 | 2,302,910,074 |
| ເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ດອກເບ້ຍຄ້າງຮັບ | 5,742,640,888 | - | - | - | - | - | 5,742,640,888 |
| ໜີ້ສິນທາງການເງິນ | | | | | | | |
| ເງິນຝາກຈາກລູກຄ້າ | 1,979,505,308 | 200,998,160 | 18,313,384,147 | 366,799,653 | - | 8,600,366,286 | 29,461,053,554 |
